# ພັນທະຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນ

ພັດທະນາ ແລະ ນຳໃຊ້ດິນ
ໃຫ້ຖືກຕ້ອງຕາມເປົ້າໝາຍ



ປົກປັກຮັກສາຄຸນນະພາບຂອງດິນ



ປະຕິບັດສະພາວະຄວາມເປັນຈິງ
ທີ່ຕ້ອງຍອມຮັບ



ບໍ່ລະເມີດສິດຜູ້ອື່ນ






ສາມາດດາວໂຫຼດຜ່ານ
QR Code ນີ້

**ຜູ້ໄດ້ຮັບສິດນຳໃຊ້ທີ່ດິນລວມທັງອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນມີພັນທະດັ່ງນີ້:**

1. ພັດທະນາ ແລະ ນຳໃຊ້ທີ່ດິນໃຫ້ຖືກຕ້ອງຕາມແຜນແມ່ບົດຈັດສັນທີ່ດິນ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນແຕ່ລະປະເພດ;
2. ນຳໃຊ້ທີ່ດິນໃຫ້ຖືກຕ້ອງຕາມເປົ້າໝາຍ, ໃນກໍລະນີຕ້ອງການຫັນປ່ຽນປະເພດທີ່ດິນຕ້ອງຂໍອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງເສຍກ່ອນ;
3. ປົກປັກຮັກສາທີ່ດິນໃຫ້ຢູ່ໃນສະພາບດີ, ບໍ່ໃຫ້ເຮັດມີການເຊາະເຈື່ອນ, ຍຸບລົງ, ເສື່ອມໂຊມ, ຮັກສາຄຸນນະພາບໃຫ້ເໝາະສົມກັບແຕ່ລະປະເພດທີ່ດິນ, ບໍ່ສ້າງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ, ບໍ່ເຮັດໃຫ້ເນື້ອທີ່ດິນແຕ່ລະປະເພດຫຼຸດລົງໂດຍບໍ່ໄດ້ຮັບອະນຸຍາດ;
4. ບໍ່ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;
5. ປະຕິບັດທາດສະພາບຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
6. ເສຍອາກອນ, ຄ່າທຳນຽມການນຳໃຊ້ທີ່ດິນ, ຄ່າທຳນຽມ ແລະ ຄ່າບໍລິການກ່ຽວກັບທີ່ດິນຕາມກົດໝາຍ ແລະ ລະບຽບການ;
7. ປະຕິບັດພັນທະອື່ນຕາມກົດໝາຍ ແລະ ລະ ບຽບການ.

**(ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ), ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019, ມາດຕາ 141)**

ໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນ LIFE
ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG
Village Focus International www.villagefocus.org
Brot für die Welt
ສະຫະພາບ ເອີຣົບ European Union